# ພວກຜູ້ຕັດສິນ (ພວກຜູ້ປົກຄອງ)

ໃຈຄວາມສຳຄັນ ການເສື່ອມສູນໄປ
ຂໍ້ຄວາມສຳຄັນ ບົດ ໒໑:໒໕
ຈຳນວນບົດ ໒໑ ບົດ
ເຣື່ອງທີ່ເກີດຂຶ້ນ ໃນປີ ໑໔໒໗ ຈົນເຖິງປີ ໑໐໖໗ ກ່ອນ ຄ.ສ.

## ໑. ຄຳນຳ

ໜັງສືນີ້ບໍ່ມີຜູ້ຢືນຢັນວ່າແມ່ນໃຜຂຽນແທ້ແຕ່ພວກຄຣູສ່ວນຫລາຍຄິດວ່າແມ່ນ ຊາເໜືອນ (ຊາມູເອັນ) ເປັນຜູ້ຂຽນແລະເນື້ອຄວາມທີ່ຂຽນກໍແມ່ນເຫດການທີ່ເກີດຂຶ້ນກັບພວກອິສຣາເອັນ ຕັ້ງແຕ່ຄາວໂຢຊວຍຕາຍຈົນເຖິງຄາວຂອງທ່ານຊາເພືອນ

## ໒. ວ່າດ້ວຍຄຳຕັດສິນ (ພິພາກສາ)

ຄືວ່າຜູ້ພິພາກສາຕາມພາສາເດີມແປວ່າ "ຜູ້ຊ່ອຍໃຫ້ພົ້ນ" ເຫດນັ້ນຈຶ່ງເອີ້ນໜັງສືນີ້ວ່າ (ພວກຜູ້ປົກຄອງ) ຄືຜູ້ທີ່ພຣະເຈົ້າຕັ້ງໄວ້ເພື່ອໃຫ້ຊ່ອຍພົລະເມືອງ ສມັຍພວກຜູ້ປົກຄອງຈຶ່ງປຽບເຖິງພຣະເຢຊູຜູ້ຈະຊ່ອຍພວກເຮົາໃຫ້ພົ້ນ (ບົດ ໒:໑໖, ໓:໙) ຈຳນວນຜູ້ປົກຄອງທັງໝົດມີ ໑໓ ຄົນ ແຕ່ຜູ້ສຳຄັນຄື:

໑. ທ່ານໂອດນຽນ

໒. ນາງເດໂບລາ

໓. ທ່ານເຄເດໂອນ

໔. ທ່ານອາບີເມເລກ

໕. ທ່ານເຢບເທ

໖. ທ່ານຊາມຊອນ

## ໓. ວ່າດ້ວຍທາງບາບຂອງພວກອິສຣາເອັນ

ກ. ບໍ່ໄດ້ຂັບໄລ່ພວກສັດຕູ ບົດ ໑:໒໑. ໒໗, ໒໘, ໓໑, ໓໓

ຂ. ເຂົາໄດ້ຕັ້ງຢູ່ໃນທ່າມກາງພວກສັດຕູ ບົດ ໑:໓໓; ໓:໕

ຄ. ສົມຣົດກັນກັບຄົນຕ່າງປະເທດ ບົດ ໓:໖

ງ. ບົວຣະບັດຮູບເຄົາຣົບ ບົດ ໒:໑໑–໑໓; ໓:໗

ຈ. ບໍ່ນັບຖືພຣະເຈົ້າ ບົດ ໒:໑໒

## ໔. ການມາຂອງທູດສວັນ

ກໍມີເຖິງ ໓ ເທື່ອ ໃນປຶ້ມນີ້ :

ກ. ປາກົດແກ່ລູກຫລານອິສຣາເອັນ ບົດທີ ໒:໑–໕

ຂ. ປາກົດແກ່ທ່ານເຄເດໂອນ ບົດທີ ໖:໑໑

ຄ. ປາກົດແກ່ທ່ານມາໂນອາ ບົດ ໑໓:໑໑

ການມາປາກົດ ຂອງທູດສວັນ ກໍແມ່ນດ້ວຍພຣະຄຸນ ຂອງພຣະເຈົ້າ ເຮົາຮູ້ວ່າທູດສວັນແມ່ນພຣະເຢຊູເອງ

## ໕. ມີຄຳສອນທີ່ສຳຄັນຄື

ກ. ຜູ້ໃດຄົບຄົນຊົ່ວຈະຊົ່ວເໝືອນເຂົາ

ຂ. ຜູ້ໃດຍັງຊຸມະບາບບໍ່ໄດ້ກໍເປັນທາດຂອງມັນ

ຄ. ຜູ້ໃດບໍ່ປະພຶດ ປະຕິບັດ ຕາມຄຳ ສັ່ງສອນຂອງ ພຣະເຈົ້າກໍຈະ ໄດ້ຮັບຜົນກັມ

ງ. ພຣະກະຣຸນາທິຄຸນຂອງພຣະເຈົ້າບໍ່ມີທີ່ສິ້ນສຸດ

ຈ. ພຣະເຈົ້າຈຶ່ງໂຜດຜູ້ທີ່ກັບມາຫາພຣະອົງ

## ປ. ບົດສຳຄັນ

ບົດທີ ໑ ເຂົາບໍ່ໄດ້ຂັບໄລ່ພວກສັດຕູ

,, ໒ ພຣະເຈົ້າ ຈຶ່ງກໍ່ໂກດ ຈຶ່ງມອບ ເຂົາໄວ້ ໃນກຳມືພວກສັດຕູ

,, ໔–໕ ເຣື່ອງນາງເດໂບລາ

,, ໖–໘ ເຣື່ອງທ່ານເຄເດໂອນ

,, ໙ ເຣື່ອງທ່ານອາບີເມເລັກ

,, ໑໑ ເຣື່ອງທ່ານເຢບເທ

,, ໑໓–໑໖ ເຣື່ອງທ່ານຊາມຊອນ

ເຫດການສຳຄັນ ໔ ຢ່າງຂອງພວກອິສຣາເອລທີ່

໑. ພວກເຂົາຫລົງລືມພຣະເຈົ້າແລະທຳບາບ (໒:໑໒; ໓:໗)

໒. ພວກເຂົາຕົກເປັນຂ້ອຍຂ້າຂອງພວກສັດຕູ (໒:໑໔)

໓. ພວກເຂົາກັບມາຫາພຣະເຈົ້າ (໓:໙)

໔. ພຣະເຈົ້າຈຶ່ງຊ່ອຍພວກເຂົາໃຫ້ພົ້ນຈາກຄວາມເປັນທາດ (໓:໙)

ບັນຊີຣາຍຊື່ພວກສັດຕູ ໆ ຄົນ ແລະຣາຍຊື່ພວກຜູ້ປົກຄອງທີ່ຊ່ອຍພວກອິສຣາເອັນໃຫ້ພົ້ນຈາກສັດຕູເຫລົ່ານີ້

| ບົດ | ສັດຕູ | ເວລາຕົກເປັນທາດ | ຊື່ຜູ້ປົກຄອງ | ເວລາທີ່ມີຄວາມສຸກ |
|---|---|---|---|---|
| ໓:໗ | ອາຣາມມາຫາລາອິມ | ໘ ປີ | ທ່ານໂອດນຽນ | ໔໐ ປີ |
| ໓:໑໔ | ໂມອາບ | ໑໘ ປີ | ທ່ານເອຫຶດ | ໘໐ ປີ |
| ໔:໑ | ການາອານ | ໔໐ ປີ | ນາງເດໂບລາ<br>ທ່ານບາຣາກ | ໔໐ ປີ |
| ໖:໑໑ | ມາດຢານ | ໗ ປີ | ທ່ານເດເດໂອນ | ໔໐ ປີ |
| ໘:໓໓ | ສັດຕູມີຫລາຍຈຳພວກ | ໓ ປີ | ທ່ານໂທຣາ (໔໓ ປີ)<br>ທ່ານຢາອີເຣ (໔໔ ປີ) | ໔໕ ປີ |
| ໑໐:໖ | ອາໂມນ | ໑໘ ປີ | ທ່ານເຢບເທ (໖ ປີ)<br>ຜູ້ອື່ນ ໆ | ໓໑ ປີ |
| ໑໓:໑ | ຟີລິດຕິນ | ໔໐ ປີ | ທ່ານຊາມຊອນ | ໔໐ ປີ |